ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ .....4055...../ກປ

ນະຄອນຫຼວງວຽງຈັນ, ວັນທີ 22 ກັນຍາ 2017

## ຄຳສັ່ງ

## ກ່ຽວກັບການເພີ່ມທະວີເອົາໃຈໃສ່ ຕິດຕາມ ເຝົ້າລະວັງ ແລະສະກັດກັ້ນພະຍາດໄຂ້ຫວັດສັດປີກ

ເຖິງ: - ທ່ານ ຫົວໜ້າກົມ, ສະຖາບັນ, ກອງ ແລະສູນ ອ້ອມຂ້າງກະຊວງກະສິກຳ ແລະປ່າໄມ້;

- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມ ໜັງສືສະເໜີຂອງ ກົມລ້ຽງສັດ ແລະການປະມົງ ເລກທີ 1699/ກລປ, ລົງວັນທີ 24 ສິງຫາ 2017.

ພະຍາດໄຂ້ຫວັດສັດປີກສາຍພັນ H5N1 ແມ່ນພະຍາດສັດທີ່ຮ້າຍແຮງ, ສາມາດຕິດຕໍ່ຈາກສັດສູ່ສັດ ຫຼືຈາກສັດສູ່ຄົນ, ມີການແຜ່ລາມໄວ, ສ້າງຜົນກະທົບທາງລົບຕໍ່ ຊີວິດ, ເສດຖະກິດ ແລະສັງຄົມ. ພະຍາດດັ່ງກ່າວໄດ້ເກີດລະບາດຄັ້ງທຳອິດຢູ່ ສປປ ລາວ ໃນປີ 2004, ຄັ້ງທີ 2 ໃນປີ 2010, ທ້າຍປີ 2016 ເຖິງປັດຈຸບັນ ໄດ້ພົບການລະບາດຂອງພະຍາດໄຂ້ຫວັດສັດປີກສາຍພັນ H5N1 ຄືນໃໝ່ ຢູ່ບາງທ້ອງຖິ່ນຂອງ ສປປ ລາວ, ມີສັດປີກ ຕາຍ ແລະຖືກຂ້າທຳລາຍຫຼາຍກວ່າ 10.000 ໂຕ ຊຶ່ງເປັນສິ່ງບົ່ງບອກວ່າ ພະຍາດໄຂ້ຫວັດສັດປີກສາຍພັນດັ່ງກ່າວ ຍັງສືບຕໍ່ເປັນໄພຂົ່ມຂູ່ຕໍ່ວຽກງານລ້ຽງສັດ ແລະຊີວິດຂອງປະຊາຊົນ.

ແຕ່ເຖິງຢ່າງໃດກໍຕາມ ແຫຼ່ງຂ່າວການລະບາດຂອງພະຍາດໄຂ້ຫວັດສັດປີກສາຍພັນ H5N1 ຢູ່ບັນດາປະເທດໃກ້ຄຽງ, ພາກພື້ນ ແລະສາກົນ ກໍຍັງມີຢ່າງຕໍ່ເນື່ອງ. ເພື່ອເປັນການປ້ອງກັນ ແລະສະກັດກັ້ນພະ ຍາດໄຂ້ຫວັດສັດປີກ H5N1 ບໍ່ໃຫ້ກັບຄືນມາລະບາດອີກ ຫຼືແຜ່ລາມອອກສູ່ວົງກວ້າງ ນັ້ນ,

## ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ກົມລ້ຽງສັດ ແລະການປະມົງ ເພີ່ມທະວີຄວາມເອົາໃຈໃສ່ ດັ່ງນີ້:
   - ຕິດຕາມ ຂໍ້ມູນຂ່າວສານ ກ່ຽວກັບການລາຍງານການເກີດພະຍາດໄຂ້ຫວັດສັດປີກຢູ່ ຂົງເຂດ ແລະປະເທດໃກ້ຄຽງ ຢ່າງໃກ້ຊິດ, ກວດກາຄືນກ່ຽວກັບທີມງານເຝົ້າລະວັງ ແລະຕອບໂຕ້ຮ່ວມກັບ ກະຊວງສາທາລະນະສຸກ, ວາງແຜນ ແລະດຶງດູດເອົາການຊ່ວຍ ເຫຼືອຈາກອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ

ເພື່ອກຽມຄວາມພ້ອມ ດ້ານງົບປະມານ, ວັດຖຸອຸປະກອນ ແລະຂີດຄວາມສາມາດໃນການກວດກາວິໄຈໃຫ້ຮັບປະກັນ;

- ສົມທົບກັບ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ໂຄສະນາ ສຶກສາອົບຮົມໃຫ້ແກ່ ປະຊາຊົນ, ພະນັກງານ ແລະຜູ້ປະກອບການ ທີ່ລ້ຽງແບບດຳເນີນທຸລະກິດ ກ່ຽວກັບສັດປີກແບບຄອບຄົວ, ກຸ່ມ ຫຼືຟາມ ໃຫ້ເຂົ້າໃຈກ່ຽວກັບ ຄວາມອັນຕະລາຍຂອງພະຍາດໄຂ້ຫວັດສັດປີກສາຍພັນ H5N1 ພ້ອມທັງໃຫ້ຄວາມຮ່ວມມືໃນການປ້ອງກັນ, ເຝົ້າລະວັງ ແລະສະກັດກັ້ນພະຍາດໄຂ້ຫວັດສັດປີກສາຍພັນດັ່ງກ່າວ ຢ່າງເຂັ້ມງວດ;

2. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳ ຂະແໜງລ້ຽງສັດ ແລະການປະມົງ ລົງສົມທົບກັບ ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ເອົາໃຈໃສ່ ຕິດຕາມ, ກວດກາ, ເຝົ້າລະວັງ, ປ້ອງກັນ ແລະສະກັດກັ້ນພະຍາດໄຂ້ຫວັດສັດປີກ ຢູ່ບັນດາຈຸດທີ່ມີຄວາມສ່ຽງສູງ ຄື:
   - ດ່ານຊາຍແດນທີ່ມີການແລກປ່ຽນ, ຊື້ - ຂາຍ, ຂົນສົ່ງສັດປີກ ແລະຜະລິດຕະພັນສັດປີກ;
   - ເຂດທີ່ມີຟາມສັດປີກ, ເຂດທີ່ມີການລ້ຽງສັດປີກແບບຄອບຄົວໜາແໜ້ນ ແລະຕະຫຼາດຊື້-ຂາຍສັດປີກມີຊີວິດ;
   - ເຂດທີ່ມີຝູງນົກຍາງຂາວ ເຄື່ອນຍ້າຍຈາກເຂດໜາວ ມາຢູ່ ຫຼືຜ່ານເຂດໃດໜຶ່ງ ຂອງ ສປປ ລາວ.

3. ໃນສະເພາະໜ້ານີ້, ຂະແໜງລ້ຽງສັດ ແລະການປະມົງແຂວງ, ນະຄອນຫຼວງວຽງຈັນ ຕ້ອງລົງສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຕິດຕາມ, ກວດກາ ສຸຂະພາບສັດປີກຂອງຕົນ ຢ່າງໃກ້ຊິດ ຕາມແຕ່ລະກໍລະນີ ດັ່ງນີ້:

**3.1. ໃນກໍລະນີ ທີ່ມີການຢັ້ງຢືນ ຜົນການວິໄຈທາງຫ້ອງວິໄຈ ກວດພົບເຊື້ອພະຍາດໄຂ້ຫວັດສັດປີກສາຍພັນ H5N1 ຫຼືສາຍພັນອື່ນທີ່ມີຄວາມສ່ຽງ ທີ່ເປັນເຊື້ອອັນຕະລາຍ ຮ້າຍແຮງ:**

- ຕ້ອງສົມທົບກັບຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ແລະຂະແໜງສາທາລະນະສຸກຂັ້ນ ທ້ອງຖິ່ນ ດຳເນີນການເຝົ້າລະວັງແບບບຸກ, ສືບສວນສອບສວນ ແລະນຳມາດຕະການຄວບຄຸມ ຢ່າງເຄັ່ງຄັດ;
- ຊຸກຍູ້, ແນະນຳປະຊາຊົນ ແລະຜູ້ປະກອບການລ້ຽງສັດປີກ ໃຫ້ເອົາໃຈໃສ່ປະຕິບັດຫຼັກການລ້ຽງສັດປີກດ້ວຍລະບົບການປ້ອງກັນຄວາມປອດໄພທາງຊີວະທີ່ດີ ແລະປະຕິບັດຕາມຫຼັກວິຊາການຢ່າງຖືກຕ້ອງ ເປັນຕົ້ນ ການອະນາໄມ ແລະຂ້າເຊື້ອ, ການປ້ອງກັນ ແລະຈຳກັດ ນົກ, ແມງໄມ້ພາຍໃນຄອກສັດປີກ ແລະບໍລິເວນອ້ອມຮອບຢ່າງເປັນປະຈຳ;
- ບຸກຄົນທີ່ ເຂົ້າ-ອອກຟາມ ຫຼືຄອກສັດປີກທຸກຄັ້ງ ຕ້ອງເຮັດອະນາໄມ-ຂ້າເຊື້ອ ເກີບ, ມື ແລະປ່ຽນຖ່າຍເສື້ອຜ້າ ກ່ອນໄປສະຖານທີ່ອື່ນ ແລະບໍ່ອະນຸຍາດໃຫ້ບຸກຄົນທີ່ບໍ່ກ່ຽວຂ້ອງ ແລະສັດອື່ນໆ ເຂົ້າ-ອອກຄອກ ຫຼືຟາມ ຢ່າງເດັດຂາດ.

**3.2. ກໍລະນີ ພົບເຫັນ ສັດປີກ ເຈັບ ຫຼືຕາຍ ຢູ່ໃນຄອກ ຫຼືຟາມ ໂດຍບໍ່ຮູ້ສາເຫດ:**

- ຕ້ອງຮີບຮ້ອນລາຍງານ ສັດຕະວະແພດບ້ານ ຫຼືນາຍບ້ານ ພາຍໃນ 24 ຊົ່ວໂມງ ແລ້ວລາຍງານຕໍ່ໃຫ້ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ລົງໄປຕິດຕາມ, ກວດກາ ແລະສືບຫາສາເຫດ ໃນເຂດເກີດພະຍາດຕົວຈິງ;
- ຫ້າມນຳເອົາສັດປີກ ຫຼືສິ້ນສ່ວນຂອງສັດປີກ ທີ່ເຈັບ ຫຼືຕາຍ ໄປປຸງແຕ່ງເປັນອາຫານ, ຈຳໜ່າຍ ຊື້ - ຂາຍ ຫຼືຖິ້ມລົງຫ້ວຍຮ່ອງ ແລະສາຍແມ່ນ້ຳຕ່າງໆ ຢ່າງເດັດຂາດ;
- ໃຫ້ຮີບຮ້ອນ ເຜົາ ຫຼືຝັງສັດທີ່ຕາຍນັ້ນໂດຍໄວ ຕາມຫຼັກວິຊາການ.

**3.3. ກໍລະນີ ສົງໄສສັດປີກເຈັບ ຫຼືຕາຍຍ້ອນພະຍາດໄຂ້ຫວັດສັດປີກ ໂດຍມີອັດຕາການຕາຍສະສົມສູງເຖິງ**

40% ໃນໄລຍະເວລາ 3 ວັນ ຫຼືພົບຜົນບວກ ຈາກການທົດສອບແບບດ່ວນ:

- ຕ້ອງທຳລາຍຝູງສັດປີກນັ້ນໂດຍໄວ ໂດຍບໍ່ໃຫ້ລໍຖ້າຜົນການກວດວິໄຈຈາກ ສູນວິໄຈພະຍາດສັດແຫ່ງຊາດ;
- ເຮັດອະນາໄມ-ຂ້າເຊື້ອຄອກສັດ ແລະບໍລິເວນອ້ອມຮອບຢ່າງທົ່ວເຖິງ ແລະບໍ່ໃຫ້ເຄື່ອນຍ້າຍສັດປີກໃນເຂດນັ້ນ ໃນວົງລັດສະໝີ 500 ແມັດ;
- ເກັບຕົວຢ່າງ ສົ່ງໄປວິໄຈ ເພື່ອຢັ້ງຢືນຫາເຊື້ອພະຍາດ, ຖ້າໄດ້ຮັບການຢືນຢັນ ພົບເຊື້ອພະຍາດໄຂ້ຫວັດສັດປີກສາຍພັນ H5N1 ໃຫ້ປະຕິບັດມາດຕະການ ຕາມຂໍ້ຕົກລົງ ເລກທີ 0046/ກປ, ລົງວັນທີ 16 ມັງກອນ 2012 ວ່າດ້ວຍການຮັບຮອງ ແລະປະກາດໃຊ້ມາດຕະຖານ ແລະຂັ້ນຕອນປະຕິບັດການຄວບຄຸມການລະບາດຂອງພະຍາດໄຂ້ຫວັດສັດປີກ.

4. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ເພີ່ມທະວີຄວາມຮັບຜິດຊອບໃນການກວດກາ, ຕິດຕາມ ການເຄື່ອນຍ້າຍສັດປີກ ແລະຜະລິດຕະພັນສັດປີກ ດັ່ງນີ້:
   - ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາຕາມເສັ້ນທາງ, ດ່ານນຳເຂົ້າ ຫຼືສະຖານທີ່ລ້ຽງສັດປີກແບບເປັນຟາມ, ກຸ່ມ ຫຼືຄອບຄົວທີ່ເຫັນວ່າ ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດການລະບາດພະຍາດໄຂ້ຫວັດສັດປີກ, ພ້ອມທັງ ມີການແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນ ແລະກັນເປັນປົກກະຕິ ເພື່ອພ້ອມກັນໂຕ້ຕອບພະຍາດໄຂ້ຫວັດສັດປີກສາຍພັນ H5N1 ຢ່າງທັນການ;
   - ຊີ້ນຳ ຂະແໜງລ້ຽງສັດ ແລະການປະມົງ ສົມທົບກັບດ່ານກວດກາສັດຕະວະແພດຊາຍແດນ ດຳເນີນການປະເມີນຄວາມສ່ຽງກ່ອນການນຳເຂົ້າທຸກຄັ້ງ ໂດຍອະນຸຍາດໃຫ້ນຳເຂົ້າສັດປີກ ຫຼືຜະລິດຕະພັນສັດປີກມາຈາກແຫຼ່ງທີ່ປອດພະຍາດ ແລະເຊື່ອຖືໄດ້ ໂດຍມີໃບຢັ້ງຢືນສຸຂະພາບສັດປີກ ຈາກອົງການສັດຕະວະແພດຂອງລັດ ປະເທດຕົ້ນທາງ;
   - ກໍລະນີພົບເຫັນການນຳເຂົ້າສັດປີກ ຫຼືຜະລິດຕະພັນສັດປີກທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະລະບຽບການ ໃຫ້ກວດຢຶດ ແລະນຳໄປທຳລາຍຖິ້ມ ດ້ວຍການເຜົາ ຫຼືຝັງ, ສ່ວນຄ່າໃຊ້ຈ່າຍໃນການທຳລາຍແມ່ນມອບໃຫ້ເຈົ້າຂອງສັດປີກ ຫຼືຜະລິດຕະພັນສັດປີກເປັນຜູ້ຮັບຜິດຊອບທັງໝົດ ພ້ອມທັງບັນທຶກ, ກ່າວເຕືອນ, ປັບໃໝ ຫຼືດຳເນີນຄະດີຕໍ່ຜູ້ທີ່ລະເມີດ ລະບຽບກົດໝາຍ ຕາມແຕ່ກໍລະນີໜັກ ຫຼືເບົາ.

5. ມອບໃຫ້ ກົມລ້ຽງສັດ ແລະການປະມົງ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ແລະດ່ານສັດຕະວະແພດ ພ້ອມກັນປະຕິບັດຄຳສັ່ງສະບັບນີ້ຕາມພາລະບົດບາດ ແລະຄວາມຮັບຜິດຊອບໃຜລາວ ຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດມີຂໍ້ສະດວກ ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານ ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້ ຮັບຊາບເປັນປົກກະຕິ ເພື່ອມີວິທີແກ້ໄຂທັນການ;

6. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້

ບ່ອນນຳສົ່ງ:

1. ຫ້ອງວ່າການສູນກາງພັກ 01 ສະບັບ (ໃຊ້ຕາງລາຍງານ);
2. ຫສນຍ 01 ສະບັບ (ໃຊ້ຕາງລາຍງານ);
3. ຄະນະເລຂາທິການ ສພຊ 01 ສະບັບ (ໃຊ້ຕາງລາຍງານ);
4. ກະຊວງ ຖວທ 01 ສະບັບ (ເພື່ອອອກຂ່າວ);
5. ຫ້ອງວ່າການແຂວງ, ນວ 01 ສະບັບ (ເພື່ອຊ່ວຍຊີ້ນຳປະຕິບັດ);
6. ເກັບມ້ຽນ 01 ສະບັບ.

ກະຊວງກະສິກຳ ແລະ ປ່າໄມ້ ... ລັດຖະມົນຕີ

ວຽງ ທິພກ້ວ